ສຳນັກງານ ຄຄຊ
ເລກທີ 0110
ວັນທີ 30 JAN 2018
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 06 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 29 ມັງກອນ 2018

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງສປປລາວ

## ປະຈຳອາທິດທີ 15-19/01/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ. ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 1,29% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກທາງດ້ານເສດຖະກິດຂອງ ສ.ອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນປະຊາຊົນທີ່ຂໍສະຫວັດດີການຕໍ່ເນື່ອງ ມີຈຳນວນ 1,95 ລ້ານຄົນ ຂອງອາທິດທີ 06/01/2018 ຈາກ 1,88 ລ້ານຄົນ ໃນອາທິດຜ່ານມາ; ພ້ອມກັນນັ້ນ, ຕົວເລກດັດຊະນີຄວາມເຊື່ອໝັ້ນຜູ້ບໍລິໂພກຂອງເດືອນ 01/2018 ຫຼຸດລົງມາຢູ່ທີ່ 94,4 ຈຸດ ຈາກ 95,9 ຈຸດ ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 08-12/01/2018 | ອາທິດນີ້ 15-19/01/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,2123 | 1,2282 | -1,29% |
| ເຢນ/ໂດລາ | 111,10 | 110,61 | 0,44% |
| ບາດ/ໂດລາ | 31,96 | 31,87 | 0,28% |
| ເປໂຊ/ໂດລາ | 50,36 | 50,77 | -0,80% |
| ຣູເປີຍ/ໂດລາ | 13.350,00 | 13.312,00 | 0,29% |
| ໂດລາສິງກະໂປ/ໂດລາ | 1,3274 | 1,3190 | 0,64% |
| ຢວນ/ໂດລາ | 6,4550 | 6,3980 | 0,89% |

### 1.2 ສະພາບລາຄານ້ຳມັນ ແລະຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 1,39% ຈາກ 63,51 ໂດລາ/ບາເຣວ ມາເປັນ 62,63 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນແອັດຊັງຂອງ ສ.ອາເມລິກາ ເພີ່ມຂຶ້ນ 3,62 ລ້ານບາເຣວ ຂອງອາທິດທີ 12/01/2018, ຈາກເພີ່ມຂຶ້ນ 4,14 ລ້ານບາເຣວ ໃນອາທິດຜ່ານມາ[1].

[1] ແຫຼ່ງທີ່ມາຂອງຂໍ້ມູນ https://www.dailyfx.com/calendar

- ສຳລັບລາຄາຄຳເພີ່ມຂຶ້ນ 0,36% ຈາກ 1.310,89 ໂດລາ/ອອນ ມາເປັນ 1.335,65 ໂດລາ/ອອນ ເນື່ອງຈາກການອ່ອນຄ່າລົງຂອງເງິນໂດລາສະຫະລັດ ເຮັດໃຫ້ນັກລົງທຶນຫຼຸດຜ່ອນການຖືຄອງເງິນໂດລາ ແລ້ວຫັນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳເພີ່ມຂຶ້ນ.

## 2.ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,07% ແຕ່ອ່ອນຄ່າລົງ 0,23% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າຂຶ້ນ 0,20% ທຽບໃສ່ສະກຸນເງິນໂດລາ ແຕ່ອ່ອນຄ່າລົງ 2,01% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 12/01/2018 | | | ອາທິດນີ້ 19/01/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[2] | | | | | | | | | | | | |
| ໂດລາ | 8.292,88 | 8.314,76 | 8.301,68 | 8.290,19 | 8.313,46 | 8.295,69 | 0,03% | 0,02% | 0,07% | 0,14% | 0,16% | 0,20% |
| ບາດ | 259,92 | 261,61 | 260,78 | 260,24 | 261,88 | 261,39 | -0,12% | -0,11% | -0,23% | -2,00% | -1,96% | -2,01% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ເພີ່ມຂຶ້ນ 0,14% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 15,17%;
- ປະລິມານເງິນ M2 ຫຼຸດລົງ 0,11% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 10,87%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (12-18/01/2018) ເຫັນວ່າ ທທກ ຊື້ໂດລາສຸດທິ 11,61 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 40,70 ລ້ານໂດລາ ແລະ ຂາຍໂດລາໄດ້ 29,09 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 476,52 ລ້ານບາດ (ໃນນີ້ຊື້ບາດໄດ້ 249,09 ລ້ານບາດ ແລະ ຂາຍບາດໄດ້ 725,61 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າເງິນໂດລາເພີ່ມຂຶ້ນ 9,17% ແລະ ເງິນບາດເພີ່ມຂຶ້ນ 23,33%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຊື້ເງິນໂດລາຈາກທະນາຄານທຸລະກິດຈຳນວນ 3 ລ້ານໂດລາ ແຕ່ເງິນບາດ ບໍ່ມີການຊື້-ຂາຍ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 9,71 ລ້ານໂດລາສະຫະລັດ ແລະ ເງິນບາດ ຈຳນວນ 91,22 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ ໃນອາທິດນີ້ເຫັນວ່າບໍ່ມີການຊື້-ຂາຍ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 05-11/01/2018 | | ອາທິດນີ້ 12-18/01/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | 41,50 | 186,58 | 40,70 | 249,09 | -1,93% | 33,50% |
| - ທ/ຄທຸລະກິດລັດ | 14.79 | 76.59 | 14.23 | 92.90 | -3.79% | 21.30% |
| - ທ/ຄທຸລະກິດອື່ນໆ | 26.71 | 109.99 | 26.47 | 156.19 | -0.90% | 42.00% |
| 2. ການຂາຍເງິນຕາຕ່າງປະເທດ | 22,43 | 603,73 | 29,09 | 725,61 | 29,69% | 20,19% |
| - ທ/ຄທຸລະກິດລັດ | 11.60 | 78.67 | 17.78 | 113.74 | 53.28% | 44.58% |
| - ທ/ຄທຸລະກິດອື່ນໆ | 10.83 | 525.06 | 11.31 | 611.87 | 4.43% | 16.53% |
| ຊື້-ຂາຍສຸດທິທທກ | 19,07 | -417,15 | 11,61 | -476,52 | -39,12% | 14,23% |
| - ຜົດຕ່ຽງຊື້-ຂາຍ | 45.95% | -223.58% | 28.53% | -191,30% | -37.91% | -14.44% |
| - ມູນຄ່າການຊື້-ຂາຍ | 63.93 | 790,31 | 69,79 | 974,70 | 9,17% | 23,33% |
| 3.ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ | 5,00 | 0,00 | 3,00 | 0,00 | | |
| - ທຫລຊື້ຈາກທທກ | 10.00 | 0.00 | 3.00 | 0.00 | | |
| - ທຫລຂາຍໃຫ້ທທກ | 0.00 | 0.00 | 0.00 | 0.00 | | |
| 4.ຊື້-ຂາຍລະຫວ່າງທທກດ້ວຍກັນ | 6,60 | 52,89 | 9,71 | 91,22 | | |
| 5.ທຫລກັບ ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລຊື້ຈາກພາກສ່ວນອື່ນໆ | 0.00 | 0.00 | 0.00 | 0.00 | | |
| -ທຫລຂາຍໃຫ້ພາກສ່ວນອື່ນໆ | 0.00 | 0.00 | 0.00 | 0.00 | | |

2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 01/2018 ຄາດວ່າຈະຢູ່ໃນລະດັບ 0,41% (ຕົວເລກຄາດຄະເນ).

2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ຫຼຸດລົງ 52,9% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 30,31 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 13,2% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 60,43 ລ້ານໂດລາສະຫະລັດທຽບເທົ່າ.

3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງສປປລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 840 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 270 ສະບັບ ເທົ່າກັບ 47,36% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 336,74 ຕື້ກີບ ທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 102,97 ຕື້ກີບ ເທົ່າກັບ 44,04% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (12-18/01/2018) ມີທັງໝົດ 3.387 ຄັ້ງ. ເຊິ່ງເປັນສະກຸນເງິນກີບ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈຳນວນ 869,75 ຕື້ກີບ ຈາກ 1.403,38 ຕື້ກີບ ມາເປັນ 533,63 ຕື້ກີບ ເທົ່າກັບ 61,97%. ສຳລັບກະຊວງການເງິນ ແມ່ນບໍ່ມີການເຄື່ອນໄຫວ.

4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 969,87 ຈຸດ ຫຼຸດລົງ 0,52% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 207.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 986,81 ລ້ານກີບ ເພີ່ມຂຶ້ນ 18,39% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 29,37% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 08-12/01/2017 | ດັດຊະນີອາທິດທີ 15-19/01/2017 | %(ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 974.98 | 969.87 | -0.52 | |

ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ(LSX) (ຫົວໜ່ວຍມູນຄ່າ 1.000ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວມະຫາຊົນ | 27.500 | 161.495.000 | 5.873 | 32.300 | 189.920.000 | 5.880 | 17.45 | 17.60 | 7 |
| ບໍລິສັດຜະລິດໄຟຟ້າລາວມະຫາຊົນ | 144.600 | 666.520.000 | 4.609 | 175.300 | 796.500.000 | 4.544 | 21.23 | 19.50 | -66 |
| ບໍລິສັດລາວເວີນມະຫາຊົນ | - | - | 3.500 | - | - | 5.000 | - | - | 1.500 |
| ບໍລິສັດປີໂຕລຽມເທລດດິ້ງລາວມະຫາຊົນ | 1.000 | 2.090.000 | 2.100 | 100 | 220.000 | 2.200 | -90.00 | -89.47 | 100 |
| ບໍລິສັດສຸວັນນີໂຮມເຊັນເຕີມະຫາຊົນ | - | - | 2.950 | - | - | 2.950 | - | - | - |
| ບໍລິສັດພູສີກໍ່ສ້າງມະຫາຊົນ | 2.000 | 3.400.000 | 1.700 | 100- | 170.000 | 1.700 | -95.00 | -95.00 | - |
| ທັງໝົດ | 175.100 | 833.505.000 | | 207.800 | 986.810.000 | | 18.68 | 18.39 | |

3. ວຽກງານອື່ນໆທີ່ພົ້ນເດັ່ນ.

- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆ: ❶ ກອງປະຊຸມຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ ທີ່ (ທຫລ), ❷ ກອງປະຊຸມໜ່ວຍງານວິຊາການ ເພື່ອປະສານງານກ່ຽວກັບວຽກງານຕ້ານການຟອກເງິນ (AML Working Group) ທີ່ (ທຫລ), ❸ ກອງປະຊຸມປຶກສາຫາລືຄະນະຮັບຜິດຊອບເຮັດວຽກຮ່ວມກັບອົງການເອັນໂລ ທີ່ (ທຫລ), ❹ ກອງປະຊຸມສ້າງຄວາມເຂົ້າໃຈກ່ຽວກັບກົດໝາຍຊຳລະກ່ອນສະພາແຫ່ງຊາດຮັບຮອງ ແລະ ປະກາດໃຊ້, ❺ ກອງປະຊຸມຄະນະຮັບຜິດຊອບກະກຽມເນື້ອໃນສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ ທີ່ (ທຫລ), ❻ ກອງປະຊຸມທະວິພາຄີລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງຊາດກຳປູເຈຍ ທີ່ (ປະເທດກຳປູເຈຍ), ❼ ກອງປະຊຸມສຳມະນາວິທະຍາສາດ ການຍົກສູງຄຸນນະພາບການເປັນເສນາທິການຮັບໃຊ້ການນຳ ແລະ ວຽກກໍ່ສ້າງຮາກຖານການເມືອງ ທີ່ (ຫ້ອງປະຊຸມສູນການພັກ), ❽ ກອງປະຊຸມຄັ້ງທີ

IV ຄະນະທີ່ປຶກສາຫ້ອງການ TAOLAM ທີ່ (ປະເທດໄທ) ແລະ ❾ ຈັດຝຶກອົບຮົມ ໂປຣແກຣມບັນຊີສໍາລັບສະຖາບັນການເງິນ ໃຫ້ພະນັກງານ ທຫລ ສາຂາ ຈໍາປາສັກ ທີ່ (ແຂວງຈໍາປາສັກ).

III.ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດໍາເນີນນະໂຍບາຍເງິນຕາແລະອັດຕາແລກປ່ຽນທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ; ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ;
- **ສືບຕໍ່ຄົ້ນຄວ້າ:** ❶ ຄົ້ນຄວ້າຂໍ້ຕົກລົງວ່າດ້ວຍກົດຈະກໍາການເຄື່ອນໄຫວຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❷ ກ່ຽວກັບກົດໝາຍພາກກອງທຶນຮ່ວມ ແລະ ❸ ກອງປະຊຸມປຶກສາຫາລື ກ່ຽວກັບຄໍາເຫັນຕໍ່ບົດປະເມີນເສດຖະກິດມະຫາພາກຂອງ IMF ໃນໄຕມາດ 4 ປີ 2017 ທີ່ (ທຫລ);
- **ກະກຽມຈັດກອງປະຊຸມ:** ❶ ກອງປະຊຸມຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ (ທຫລ), ❷ ກອງປະຊຸມໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ທີ່ (ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ) ແລະ ❸ ກອງປະຊຸມຂອງຊ່ຽວຊານໃນການສໍາຫຼວດຂໍ້ມູນສ້າງ Action plan ຂອງແຜນຈັດຕັ້ງປະຕິບັດການເຂົ້າເຖິງການບໍລິການທາງດ້ານການເງິນ ສໍາລັບ ສປປ ລາວ ປີ 2016-2020;
- **ເຂົ້າຮ່ວມກອງປະຊຸມ ແລະ ສໍາມະນາຕ່າງໆ:** ❶ ກອງປະຊຸມລັດຖະບານສະໄໝສາມັນ ປະຈໍາເດືອນ ມັງກອນ 2018 ທີ່ (ຫ້ອງວ່າການສູນກາງພັກ), ❷ ກອງປະຊຸມເຜີຍແຜ່ເຊື່ອມຊຶມນິຕິກໍາກ່ຽວກັບວຽກງານກໍ່ສ້າງພັກ-ພະນັກງານ ທີ່ (ຫ້ອງປະຊຸມແຫ່ງຊາດ), ❸ ກອງປະຊຸມເປີດກວ້າງເພື່ອທາບທາມຄໍາເຫັນໃສ່ຮ່າງກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ທີ່ (ນະຄອນຫຼວງວຽງຈັນ, ແຂວງຈໍາປາສັກ ແລະ ຫຼວງພະບາງ), ❹ ກອງປະຊຸມຖອດຖອນບົດຮຽນວຽກງານຄຸ້ມຄອງສະຖາບັນການເງິນຈຸລະພາກ ປະຈໍາປີ 2017 ທີ່ (ແຂວງຫຼວງພະບາງ), ❺ ກອງປະຊຸມ 03 ຝ່າຍລະຫວ່າງ ກຄສງ, ອົງການ DGRV ແລະ SACUDIL ເພື່ອປຶກສາຫາລື ກ່ຽວກັບການສ້າງເຄືອຂ່າຍສະຫະກອນໃນ ສປປ ລາວ ແລະ ການສ້າງຫຼັກສູດສະຫະກອນ ທີ່ (ຫ້ອງປະຊຸມ DGRV), ກອງປະຊຸມ WC-CMD ແລະ ກອງປະຊຸມ AFCDM-WO ຢູ່ປະເທດສິງກະໂປ, ❻ ກອງປະຊຸມປຶກສາຫາລືກ່ຽວກັບການກະກຽມຄວາມພ້ອມ ເພື່ອລາຍງານຜົນການສະຫຼຸບ ການຈັດຕັ້ງປະຕິບັດກົດໝາຍ ແລະ ອອກນິຕິກໍາໃຕ້ກົດໝາຍ ທີ່ (ຫ້ອງປະຊຸມສະພາແຫ່ງຊາດ), ❼ ກອງປະຊຸມສະຫຼຸບວຽກງານໄປສະນີ, ໂທລະຄົມມະນາຄົມ ແລະ ສື່ສານ ປະຈໍາປີ 2017 ແລະ ພິທີເປີດງານວາງສະແດງ Lao ICT Expo 2018 ທີ່ (ສູນການຄ້າລາວໄອເຕັກ) ແລະ ❽ ສໍາມະນາກ່ຽວກັບວຽກງານປະເມີນຄວາມສ່ຽງແຫ່ງຊາດ ຮ່ວມກັບທະນາຄານໂລກ ທີ່ ຫ້ອງການທະນາຄານໂລກ.

ຫົວໜ້າຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ